ບົດລາຍງານ
ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ປະຈຳປີ 2024



ໂດຍ:

ຕະຫຼາດຫຼັກຊັບລາວ

ສາລະບານ

1. ຂໍ້ມູນກ່ຽວກັບບໍລິສັດ ລາວອາໂກຣເທັກ ມະຫາຊົນ 1

1.1. ຂໍ້ມູນທົ່ວໄປ 1

1.2. ຂໍ້ມູນທາງການເງິນ 1

1.3. ຂໍ້ມູນສະພາບໍລິຫານ 1

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 1

1.5. ຂໍ້ມູນຄະນະອຳນວຍການ 2

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG 2

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ 2

2.1. ຜົນການປະເມີນຄະແນນຕົວຈິງ 2

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 3

3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ 3

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 3

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 4

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 5

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 6

4. ສິ່ງທີ່ຕ້ອງໄດ້ປັບປຸງ 8

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ 8

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 9

1. ຂໍ້ມູນກ່ຽວກັບ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

1.1. ຂໍ້ມູນທົ່ວໄປ

ຫົວຂໍ້	ລາຍລະອຽດ
ຊື່ບໍລິສັດ:	ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ)
ທີ່ຕັ້ງສຳນັກງານ:	ສຳນັກງານໃຫ່ຍ, ບ້ານ ໜອງຄັນຄູ, ເມືອງ ນາຊາຍທອງ , ນະຄອນຫຼວງວຽງຈັນ
ເບີໂທລະສັບ:	030 9882809
ປະເພດທຸລະກິດ:	ທີ່ປຶກສາດ້ານກະສິກຳແບບຄົບວົງຈອນ
ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ:	25 ກັນຍາ 2018
ເວັບໄຊ:	
ຈຳນວນພະນັກງານ:	45 ຄົນ
ຈຳນວນຮຸ້ນຈົດທະບຽນ:	100,000,000 ຮຸ້ນ
ລາຄາຕະຫຼາດ (20/12/2023):	760 ກີບ/ຮຸ້ນ
ມູນຄ່າຕະຫຼາດ (20/12/2023):	76,000,000,000 ລ້ານກີບ

1.2. ຂໍ້ມູນທາງການເງິນ

ຕົວເລກຂໍ້ມູນການເງິນ (31 ທັນວາ 2023)	
ຊັບສິນ: 310,660.95 ລ້ານກີບ	ລາຍຮັບ: 40,556.99 ລ້ານກີບ
ໜີ້ສິນ: 265,483.17 ລ້ານກີບ	ລາຍຈ່າຍ: 49,733.08 ລ້ານກີບ
ທຶນ: 50,000 ລ້ານກີບ	ຂາດທຶນສຸດທິ: 9,176.09 ລ້ານກີບ

1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານຂອງ ບໍລິສັດ ລອທ ປະກອບມີສະມາຊິກສະພາບໍລິຫານທັງໝົດ 6 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ອະພິສິດ ຣຸຈິກຽດກຳຈອນ	ປະທານສະພາບໍລິຫານ/ສະມາຊິກອິດສະຫຼະ
2	ທ່ານ ນາງ ຄຳແພງ ພັດທະດາວົງ	ຮອງປະທານສະພາບໍລິຫານ/ສະມາຊິກອິດສະຫຼະ
3	ທ່ານ ເສດ ພັດທະນະມາດ	ສະມາຊິກ
4	ທ່ານ ພົງຖານ ພິດຈຳນົງ	ສະມາຊິກ
5	ທ່ານ ທະນະເສດ ມາລະວັນໂນ	ສະມາຊິກ
6	ທ່ານ ນາງ ດວງສະໄໝ ເລົ່າຟົງ	ສະມາຊິກອິດສະຫຼະ

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ບໍລິສັດ ລອທ ມີ 1 ຄະນະກຳມະການກວດສອບ ຊຶ່ງລາຍລະອຽດ ດັ່ງນີ້:

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ອະພິສິດ ຣຸຈິກຽດກຳຈອນ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ນາງ ດວງສະໄໝ ເລົ່າຝຸງ	ສະມາຊິກ
3	ທ່ານ ນາງ ຄຳແພງ ພັດທະດາວົງ	ສະມາຊິກ

1.5. ຂໍ້ມູນຄະນະອຳນວຍການ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ເສດ ພັດທະນະມາດ	ຜູ້ອຳນວຍການໃຫຍ່
2	ທ່ານ ນາງ ສຸກັນຍາ ຈຳປາແສງ	ຮອງຜູ້ອຳນວຍການໃຫຍ່
3	ທ່ານ ພົງຖານ ພິດຈຳນົງ	ຮອງຜູ້ອຳນວຍການໃຫຍ່

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

ລ.ດ	ຊື່ ແລະ ນາມສະກຸນ	ເບີໂທ	ອີເມລ
1	ທ່ານ ນາງ ສຸກັນຍາ ຈຳປາແສງ	020 9747 9987	sjpakan19@gmail.com
2	ທ່ານ ວັນສະເຫຼີມ ສີສຸຄຳມັງ	020 5533 5311	lerm.vnp@gmail.com

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ ບໍລິສັດ ລອທ ປະຈຳປີ 2024 ແມ່ນເຫັນວ່າ: ບໍລິສັດ ລອທ ໄດ້ຄະແນນທັງໝົດ 41.96 ຄະແນນ ຈັດເປັນ ປະເພດ 2 ດາວ ມີລາຍລະອຽດເພີ່ມເຕີມ ດັ່ງນີ້:

ພາກ	ຄະແນນທັງໝົດ	ຄະແນນຕົວຈິງ
ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ	10	4.67
ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ	10	0.00
ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ	40	20.54
ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ	40	16.76
ລວມ	**100**	**41.96**


1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 4.67 ຄະແນນ;
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 0 ຄະແນນ;
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 20.54 ຄະແນນ;
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້ 16.76 ຄະແນນ.

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນ ປະກອບມີ 3 ປະເພດ ເຊັ່ນ: FA (Fully Applied) - ປະຕິບັດໄດ້ທັງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ບໍລິສັດ ລອທ ສາມາດປະຕິບັດໄດ້ດັ່ງນີ້:

ລອທ	ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ		ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ		ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ		ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ		ລວມ	
	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%
ປະຕິບັດໄດ້ທັງໝົດ	5.0	33%	0.0	0%	17.0	46%	10.0	27%	32.0	32%
ປະຕິບັດໄດ້ບາງສ່ວນ	4.0	27%	0.0	0%	4.0	11%	11.0	30%	19.0	19%
ບໍ່ສາມາດປະຕິບັດໄດ້	6.0	40%	11.0	100%	16.0	43%	16.0	43%	49.0	49%
ລວມ	**15.0**	**100%**	**11.0**	**100%**	**37.0**	**100%**	**37.0**	**100%**	**100.0**	**100%**

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ບໍລິສັດ ລອທ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັງໝົດ 32%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ 19% ແລະ ບໍ່ສາມາດປະຕິບັດໄດ້ 49% ຂອງຄຳຖາມທັງໝົດ, ຜົນການປະເມີນຂ້າງເທິງ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:



3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ລອທ ສາມາດປະຕິບັດໄດ້ທັງໝົດ (FA) 33%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ ເທົ່າກັບ (PA) 27% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 40% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ການຈັດກອງປະຊຸມຜູ້ຖືຮຸ້ນ: ບໍລິສັດ ລອທ ໄດ້ສົ່ງໜັງສືແຈ້ງເຊີນໃຫ້ແກ່ຜູ້ຖືຮຸ້ນ ຢ່າງໜ້ອຍ 21 ວັນ ພ້ອມທັງຄັດຕິດເອກະສານສຳຄັນກ່ອນກອງປະຊຸມຜູ້ຖືຮຸ້ນ ພ້ອມນັ້ນ, ກໍໄດ້ແຈ້ງຂັ້ນຕອນ ວິທີການລົງຄະແນນສຽງ ແລະ ຜົນຂອງການລົງຄະແນນໃນແຕ່ລະວາລະ ລວມເຖິງການໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ. - ບໍລິສັດ ລອທ ໄດ້ແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. - ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນກ່ຽວກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ. - ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈຳປີ ເພື່ອຕອບຄຳ ແລະ ຊີ້ແຈ້ງປະເດັນທີ່ກ່ຽວຂ້ອງ.	- ບໍລິສັດ ລອທ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ສິດໃນການສະເໜີລາຍຊື່ຜູ້ສະໝັກເປັນສະມາຊິກສະພາບໍລິຫານຂອງບໍລິສັດ ພ້ອມທັງໃຫ້ສິດແກ່ຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ລອທ ຍັງບໍ່ກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ລອທ ຍັງບໍ່ໄດ້ກຳນົດເຫດການກ່ຽວກັບການລົງທຶນ, ການຊື້-ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ ແລະ ການອອກຈຳໜ່າຍຮຸ້ນໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ຊຶ່ງຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ຜູ້ອຳນວຍການໃຫຍ່ ບໍ່ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ. - ບໍລິສັດ ລອທ ຍັງບໍ່ໄດ້ກຳນົດກ່ຽວກັບນະໂຍບາຍປັນຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນ.

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ບໍລິສັດ ລອທ ສາມາດປະຕິບັດໄດ້ທັງໝົດ (FA) 0% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 0% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 100% ຂອງຄຳຖາມທັງໝົດໃນພາກດັ່ງກ່າວ ເຊິ່ງສະແດງອອກດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
	- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍໃນການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ. - ບໍລິສັດ ລອທ ຍັງບໍ່ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ຂອງພະນັກງານ

	ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ, ນະໂຍບາຍພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້ ໃນນິຕິກຳຂອງບໍລິສັດ. - ບໍລິສັດ ລອທ ຍັງບໍ່ໄດ້ສ້າງ ແລະ ກຳນົດນະໂຍບາຍ ດ້ານຄວາມປອດໄພ, ສະຫວັດດີການສັງຄົມ ໃຫ້ແກ່ພະນັກງານ. - ບໍລິສັດ ລອທ ຍັງບໍ່ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນ ເພື່ອຮັບຄຳເຫັນ ຫຼື ຄຳຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາ ໄວ້ໃນເວັບໄຊ ຫຼື ບົດສະຫຼຸບການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ລອທ ສາມາດປະຕິບັດໄດ້ທັງໝົດ (FA) 46% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 11% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 43% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງສະແດງອອກດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ລອທ ໄດ້ເປີດເຜີຍຂໍ້ມູນທາງການເງິນ ແລະ ບໍ່ແມ່ນທາງການເງິນ, ຂໍ້ມູນກ່ຽວກັບປະຫວັດການສຶກສາ	- ບໍລິສັດ ລອທ ບໍ່ ໄດ້ເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ, ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ

ແລະ ການຝຶກອົບຮົມ ຂອງສະມາຊິກສະພາບໍລິຫານໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.
- ບໍລິສັດ ລອທ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງບໍລິສັດ.
- ບໍລິສັດ ລອທ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ.
- ບໍລິສັດ ລອທ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ.
- ບໍລິສັດ ລອທ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ.
- ບໍລິສັດ ລອທ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນ ພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ.
- ບໍລິສັດ ລອທ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ.
- ບໍລິສັດ ລອທ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.
- ບໍລິສັດ ລອທ ໄດ້ເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນໃນແຕ່ລະປີ.
- ບໍລິສັດ ລອທ ໄດ້ມີການແຕ່ງຜູ້ຮັບຜິດຊອບວຽກງານລາຍງານ ແລະ ເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.

ຂອງຕົນ, ປັດໄຈຄວາມສ່ຽງຂອງບໍລິສັດ, ນະໂຍບາຍປັນຜົນ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານ, ເຫດການສຳຄັນທີ່ເກີດຂຶ້ນພາຍໃນປີ, ຄ່າຕອບແທນ ແລະ ມູນຄ່າລວມທັງໝົດຂອງສະມາຊິກສະພາບໍລິຫານ, ຄະນະກຳມະການສະພາບໍລິຫານ ແລະ ຄະນະອຳນວຍການໃນແຕ່ລະປີ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ.
- ບໍລິສັດ ລອທ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງ ສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນ ໃນເອກະສານລາຍງານການເງິນປະຈຳປີຂອງບໍລິສັດ.
- ບໍລິສັດ ລອທ ບໍ່ໄດ້ລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ.
- ບໍລິສັດ ລອທ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບເອກະສານລາຍງານການເງິນປະຈຳໄຕມາດ/ປະຈຳປີ, ບົດລາຍງານການເຄື່ອນໄຫວທຸລະກິດປະຈຳ 6 ເດືອນຕົ້ນປີ/ປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ.
- ບໍລິສັດ ລອທ ບໍ່ໄດ້ເປີດເຜີຍຄ່າບໍລິການອື່ນທີ່ບໍ່ແມ່ນການກວດສອບເອກະສານລາຍງານການເງິນຂອງບໍລິສັດກວດສອບ.
- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍຂໍ້ມູນກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່.
- ບໍລິສັດ ລອທ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານໃຫ້ມອນຊິນຊາບ ຜ່ານທາງເວັບໄຊຂອງບໍລິສັດ.
- ບໍລິສັດ ລອທ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບພະນັກງານຮັບຜິດຊອບຕິດຕໍ່ພົວພັນກັບນັກລົງທຶນ (ນັກລົງທຶນສຳພັນ) ໃນເວັບໄຊຂອງບໍລິສັດ.

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ບໍລິສັດ ລອທ ສາມາດປະຕິບັດໄດ້ທັງໝົດ (FA) 32%, ປະຕິບັດໄດ້ບາງສ່ວນ (PA) 32% ແລະ ບໍ່ສາມາດປະຕິບັດໄດ້ (NA) 36% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ສະພາບໍລິຫານ ປະກອບມີສະມາຊິກສະພາບໍລິຫານເພດຍິງ 2 ທ່ານ. - ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. - ສະພາບໍລິຫານ ປະກອບມີສະມາຊິກທັງໝົດ 06 ທ່ານ ແລະ ໃນນີ້ສະມາຊິກອິດສະຫຼະມີ 03 ທ່ານ. - ກົດລະບຽບຂອງ ບໍລິສັດ ລອທ ໄດ້ກຳນົດຈະແຈ້ງກ່ຽວກັບເງື່ອນໄຂ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ. - ສະພາບໍລິຫານໄດ້ມີການຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງ ຕໍ່ປີ. - ປະທານສະພາບໍລິຫານ ແລະ ປະທານຄະນະກຳມະການກວດສອບ ແມ່ນສະມາຊິກອິດສະຫຼະ ແລະ ມີປະສົບການທາງດ້ານບັນຊີ. - ສະພາບໍລິຫານ ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດທາງແຜນຍຸດທະສາດຂອງບໍລິສັດ. - ສະພາບໍລິຫານໄດ້ມີການແຕ່ງຕັ້ງຄະນະກຳມະການກວດສອບ. - ສະພາບໍລິຫານ ໄດ້ກຳນົດກ່ຽວກັບອົງປະຊຸມຂອງກອງປະຊຸມສະພາບໍລິຫານ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ.	- ບໍລິສັດ ລອທ ຍັງບໍ່ໄດ້ແຕ່ງຕັ້ງສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ. - ບໍລິສັດ ລອທ ຍັງບໍ່ໄດ້ກຳນົດເງື່ອນໄຂຂອງສະມາຊິກສະພາບໍລິຫານໄວ້ໃນກົດລະບຽບພາຍໃນຂອງບໍລິສັດ ຕ້ອງມີສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ຢ່າງໜ້ອຍ 1 ທ່ານ ແລະ ສະມາຊິກສະພາບໍລິຫານເພດຍິງ ຢ່າງໜ້ອຍ 1 ທ່ານ ແລະ ສະມາຊິກດັ່ງກ່າວມີປະສົບການເຮັດວຽກໃນຂະແໜງການທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ, ອາຍຸການດຳລົງຕຳແໜ່ງ ຫຼື ພື້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ ລວມໄປເຖິງນະໂຍບາຍກຳນົດຄ່າຕອບແທນຕ່າງໆ ຂອງສະມາຊິກສະພາບໍລິຫານ ແລະ ອື່ນໆ. - ກົດລະບຽບກ່ຽວກັບສະພາບໍລິຫານ ບໍ່ໄດ້ເປີດເຜີຍຜ່ານເວັບໄຊຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກຳນົດຄ່າຕອບແທນ. - ຄະນະກຳມະການກວດສອບ ບໍ່ໄດ້ມີການຈັດກອງປະຊຸມຢ່າງໜ້ອຍ 4 ຄັ້ງຕໍ່ປີ. - ສະພາບໍລິຫານ ບໍ່ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດທາງແຜນຍຸດທະສາດຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການສະພາບໍລິຫານຕ່າງໆ ພ້ອມທັງເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານ, ຄະນະກຳມະການສະພາບໍລິຫານທີ່ ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື.

	- ສະພາບໍລິຫານ ບໍ່ໄດ້ປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ. - ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ. - ສະມາຊິກສະພາບໍລິຫານແຕ່ລະຄົນ ບໍ່ໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການກ່ອນການປະຊຸມ. - ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຍັງບໍ່ໄດ້ສ້າງ ແລະ ຄຸ້ມຄອງຂັ້ນຕອນ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.

4. ສິ່ງທີ່ຕ້ອງໄດ້ປັບປຸງ

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ, ບໍລິສັດ ລອທ ຄວນແກ້ໄຂບັນຫາທີ່ຄົງຄ້າງ ດັ່ງນີ້:

- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ສິດໃນການສະເໜີລາຍຊື່ຜູ້ສະໝັກເປັນສະມາຊິກສະພາບໍລິຫານຂອງບໍລິສັດ ພ້ອມທັງໃຫ້ສິດແກ່ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນທັງໝົດຂອງບໍລິສັດ ຄວນໄດ້ຮັບສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນກຳນົດນະໂຍບາຍປັນຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນ ພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ກຳນົດເຫດການຕ່າງໆ ທີ່ຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການອອກຈຳໜ່າຍຮຸ້ນໃໝ່, ການລົງທຶນ ຊື້ ຂາຍ, ໂອນ ຊັບສິນທີ່ມູນຄ່າກວມເອົາ 50% ຂຶ້ນໄປ ຂອງຊັບສິນທັງໝົດຂອງບໍລິສັດ ແລະ ລາຍການທີ່ກ່ຽວພັນອື່ນໆ ໄວ້ໃນລະບຽບພາຍໃນຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດ, ນະໂຍບາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເຈົ້າໜີ້ ເປັນຕົ້ນແມ່ນ ການກຳນົດເງື່ອນໄຂການຄ້ຳປະກັນ ແລະ ການຜິດນັດຊຳລະໜີ້;

- ສະພາບໍລິຫານ ຄວນສ້າງ ແລະ ຮັບຮອງ ນະໂຍບາຍຄວາມປອດໄພ ແລະ ສະຫວັດດີການຂອງພະນັກງານ, ນະໂຍບາຍການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ, ນະໂຍບາຍກ່ຽວກັບການພົວພັນຊຸມຊົນທ້ອງຖິ່ນທີ່ ບໍລິສັດດຳເນີນການຢູ່, ນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ, ນະໂຍບາຍ ສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ;
- ສະພາບໍລິຫານຄວນສ້າງ ແລະ ຮັບຮອງນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມ ງວດ;
- ສະພາບໍລິຫານຄວນສ້າງ ແລະ ກຳນົດນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນ ຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຮຽນ ກ່ຽວກັບຜິດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ ຂອງບໍລິສັດ;
- ສະພາບໍລິຫານ ຄວນກຳນົດໂຄງປະກອບບຸກຄະກອນຂອງສະພາບໍລິຫານ ຕ້ອງປະກອບມີສະມາຊິກສະພາ ບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ ຢ່າງໜ້ອຍ 1 ທ່ານ, ເງື່ອນໄຂ ແລະ ມາດຕະຖານຂອງການເປັນສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ, ສິດ, ໜ້າທີ່, ຄວາມ ຮັບຜິດຊອບ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ ລວມທັງສະມາຊິກ ອິດສະຫຼະ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າຕອບແທນຂອງສະມາຊິກສະພາ ບໍລິຫານ ແລະ ອື່ນໆ ຕາມຫຼັກການຄຸ້ມຄອງບໍລິຫານ ທີ່ກຳນົດໄວ້ໃນຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານ ສຳລັບບໍລິສັດຈົດທະບຽນ;
- ຄວນສ້າງລະບຽບສະເພາະຂອງຄະນະກຳມະການຕ່າງໆຂອງສະພາບໍລິຫານ ເປັນຕົ້ນສິດ, ໜ້າທີ່, ຄວາມ ຮັບຜິດຊອບ, ໂຄງປະກອບບຸກຄະລາກອນ, ມາດຕະຖານ ແລະ ເງື່ອນໄຂການເປັນສະມາຊິກຄະນະກຳມະການ, ກົນໄກ, ຂັ້ນຕອນ ແລະ ມາດຖານໃນການຄັດເລືອກ ຫຼື ກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະ ກຳມະການສະພາບໍລິຫານ ແລະ ຄະນະອຳນວຍການ ຕະຫຼອດຮອດວິທີການເຮັດວຽກ ແລະ ນະໂຍບາຍກຳນົດຄ່າ ຕອບແທນຕ່າງໆ ຂອງຄະນະກຳມະການ ແລະ ອື່ນໆ ພ້ອມທັງສະເໜີໃຫ້ສະພາບໍລິຫານຂອງບໍລິສັດ ພິຈາລະນາ ແລະ ຮັບຮອງເອົາ;
- ຄະນະກຳມະການຄຸ້ມຄອງຄວາມສ່ຽງຄວນສ້າງ ແລະ ຄຸ້ມຄອງຂັ້ນຕອນນະໂຍບາຍໃນການກຳນົດ ແລະ ບໍລິຫານ ຄວາມສ່ຽງ.

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ ບໍລິສັດ ລອທ ຄວນເອົາໃຈໃສ່ຈັດຕັ້ງປະຕິບັດເພີ່ມເຕີມ ດັ່ງນີ້:

- ຄວນເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນ ຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ລາຍການທີ່ກ່ຽວພັນ (RPTs) ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນເປີດເຜີຍຂໍ້ມູນກ່ຽວກັບນະໂຍບາຍເງິນປັນຜົນ, ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ ຂອງຕົນ (ຖ້າມີ ຫຼື ບໍ່ມີກໍ່ ຕາມ), ປັດໄຈຄວາມສ່ຽງ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະ ການຂອງສະພາບໍລິຫານ, ເຫດການສຳຄັນພາຍໃນປີ, ນະໂຍບາຍການກຳນົດຄ່າຕອບແທນ ແລະ ມູນຄ່າລວມ ຂອງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແຕ່ລະປີ ໃນບົດລາຍການເຄື່ອນໄຫວທຸລະກິດປະຈຳປີ

- ຄວນເປີດເຜີຍຂໍ້ມູນກ່ຽວກັບເອກະສານລາຍງານການເງິນປະຈຳໄຕມາດ/ປະຈຳປີ, ບົດລາຍງານການເຄື່ອນໄຫວທຸລະກິດປະຈຳ 6 ເດືອນຕົ້ນປີ/ປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນ, ເງື່ອນໄຂ ແລະ ການແຕ່ງຕັ້ງສະພາບໍລິຫານ ແລະ ຄະນະອຳນວຍການຊຸດໃໝ່;
- ຄວນລາຍງານ ຫຼື ເປີດເຜີຍຂໍ້ມູນການຊື້ ຂາຍຮຸ້ນບໍລິສັດ ຂອງສະມາຊິກສະພາບໍລິຫານ ຫຼື ຄະນະອຳນວຍການ, ຫົວໜ້າກວດກາພາຍໃນ, ຫົວໜ້າບັນຊີ ແລະ ຫົວໜ້າການເງິນ ພາຍໃນ 72 ຊົ່ວໂມງ;
- ຄວນເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບ ແລະ ຄ່າບໍລິການອື່ນຂອງບໍລິສັດກວດສອບທີ່ບໍ່ກ່ຽວຂ້ອງກັບການກວດເອກະສານລາຍງານການເງິນ (ຖ້າມີ ຫຼື ບໍ່ມີກໍຕາມ);
- ສະພາບໍລິຫານ ຄວນຮັບຮອງ ແລະ ເປີດເຜີຍລະບຽບພາຍໃນຂອງຄະນະກຳມະການຕ່າງໆ ຂອງສະພາບໍລິຫານໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນຮັບຮອງເອົາແຜນຈັດກອງປະຊຸມຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ ກ່ອນເອົາວັນຈັດກອງປະຊຸມ ແລະ ວາລະທີ່ຈະນຳມາປຶກສາຫາຫາລື;
- ສະມາຊິກສະພາບໍລິຫານແຕ່ລະຄົນ ຄວນໄດ້ຮັບເອກະສານທີ່ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນການປະຊຸມ;
- ຄວນເຜີຍແຜ່ກົດລະບຽບຂອງສະພາບໍລິຫານໃນເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດຜະນັກງານ ສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ສະພາບໍລິຫານ ຄວນແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄັດເລືອກ ແລະ ຄະນະກຳມະການກຳນົດຄ່າຕອບແທນ. ພ້ອມນັ້ນ, ຄະນະກຳມະການຕ່າງໆຂອງສະພາບໍລິຫານ ຄວນຈັດກອງປະຊຸມສອດຄ່ອງຕາມລະບຽບການທີ່ກ່ຽວຂ້ອງ ພ້ອມນັ້ນ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການ ຄວນເຂົ້າຮ່ວມກອງປະຊຸມດັ່ງກ່າວ ເປັນປົກກະຕິ;
- ຜູ້ອຳນວຍການ ຄວນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນເພື່ອຕອບຄຳຖາມ ແລະ ຊີ້ແຈ້ງບັນຫາໃຫ້ແກ່ຜູ້ຖືຮຸ້ນ.
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ;
- ສະພາບໍລິຫານຄວນເຜີຍແຜ່ມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

ຜູ້ອຳນວຍການໃຫຍ່ ຕລຊລ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸພັກ ຖິ່ນໄຊພອນ